# ລາຍງານຜົນ ທັບນັກກິລາທີມຊາດລາວ

## ໃນງານມະຫາກຳກິລາຊີເກມ ຄັ້ງທີ 33

ບາງກອກ ແລະ ຊົນບູລີ ປະເທດໄທ ວັນທີ: 9 - 20 ທັນວາ 2025












ກົມກິລາລະດັບສູງ ກະຊວງສຶກສາທິການ ແລະ ກິລາ



## ສະພາບລວມ (Overview)

ກົມກິລາລະດັບສູງ ໃນນາມຫົວໜ້າກຳມະການເຕັກນິກກິລາ ຄອລ, ທັງເປັນຫົວໜ້າຄະນະກິລາລາວ ໃນການກະກຽມ ແລະ ເຂົ້າຮ່ວມການແຂ່ງຂັນກິລາຊີເກມ ຄັ້ງທີ 33 ທີ່ຣາຊອານາຈັກໄທ ປີ 2025, ພາຍຫລັງໄດ້ຮັບການອະນຸມັດຈາກລັດຖະບານ ກົມກິລາລະດັບສູງ ກໍ່ໄດ້ສົມທົບກັບຄະນະກຳມະການໂອແລມປິກແຫ່ງຊາດລາວ, ສະຫະພັນກິລາແຫ່ງຊາດ ແລະ ພາກສວນທີ່ກ່ຽວຂ້ອງ ໄດ້ຈັດກອງປະຊຸມປຶກສາຫາລື ເພື່ອຄັດເລືອກປະເພດກິລາ ຄູຝຶກ ແລະ ນັກກິລາ ທີ່ຈະເຂົ້າຮ່ວມການແຂ່ງຂັນ ໃນງານມະຫາກຳກິລາຊີເກມຄັ້ງນີ້ ແລະ ການກະກຽມເຂົ້າຮ່ວມການແຂ່ງຂັນລາຍການຕ່າງໆ ໃນລະດັບພາກພື້ນ ແລະ ສາກົນ.

## ໄລຍະການກະກຽມ:




1) ກົມກິລາລະດັບສູງ, ຄະນະກຳມະການໂອແລມປິກແຫ່ງຊາດລາວ ແລະ ສະຫະພັນກິລາແຫ່ງຊາດ ໄດ້ຄັດເລືອກຄູຝຶກ ແລະ ນັກກິລາ ເພື່ອກຽມເຂົ້າສູນຝຶກຊ້ອມ ພ້ອມດ່ຽວກັນນັ້ນກໍ່ແຕ່ງຕັ້ງຄະນະຮັບຜິດຊອບລົງຕິດຕາມການຝຶກຊ້ອມຂອງນັກກິລາດັ່ງ່າວ, ໃນການກະກຽມແລະເຂົ້າຮ່ວມ ຊີເກມຄັ້ງນີ້ ລັດຖະບານຮັບຜິດຊອບ ມີ 19 ປະເພດກິລາ ຊຶ່ງໄດ້ແບ່ງອອກເປັນ 3 ໝວດຄື : ປະເພດກິລາຄວາມຫວັງຫຼຽນຄຳ ຝຶກຊ້ອມ 120 ວັນ (ເປຕັງ, ບີລຽດ-ສະນຸກເກີ້, ຢູໂດ, ກະຕໍ້ ແລະ ມວຍລາວ); ປະເພດກິລາຫວັງຫຼຽນເງິນຝຶກຊ້ອມ 90 ວັນ (ວູຊູ, ປັນຈັກສີລັດ, ມວຍສາກົນ, ມວຍປ້ຳ, ເທຄວັນໂດ ແລະ ຈູຈິດຊູ), ແລະ ປະເພດກິລາທີ່ສູ້ຊົນເອົາຫຼຽນທອງ ຝຶກຊ້ອມ 70 ວັນ (ແລ່ນ-ລານ, ຄິກບ໋ອກຊິງ, ລົດຖີບ, ຍົກນ້ຳໜັກ, ຍິງທະນູ, ອີສະປອດ, ກາຣາເຕໂດ, ລອຍນ້ຳ);







2) ການເຂົ້າຮ່ວມການແຂ່ງຂັນກິລາຊີເກມໃນຄັ້ງນີ້ ມີ 17 ປະເພດກິລາ ສະເໜີເຂົ້າຮ່ວມການແຂ່ງຂັນ ໂດຍແມ່ນສະຫະພັນກິລາແຫ່ງຊາດທີ່ກ່ຽວຂ້ອງ ເປັນຜູ້ຮັບຜິດຊອບກຸ່ມຕົນເອງຮອບດ້ານ ການກະກຽມ ແລະເຂົ້າຮ່ວມການແຂ່ງຂັນ;

3) ກຳມະການເຕັກນິກກິລາ ຄອລ ໄດ້ສົມທົບກັບພາກສວນທີ່ກ່ຽວຂ້ອງຈັດຝຶກອົບຮົມການສ້າງແຜນຝຶກຊ້ອມໃຫ້ແກ່ບັນດາຄູຝຶກທີມຊາດ ເພື່ອກຽມເຂົ້າຮ່ວມການແຂ່ງຂັນກິລາຊີເກມຄັ້ງນີ້ນອກຈາກນີ້ ຄະນະຮັບຜິດຊອບກໍ່ໄດ້ຈ້າງຄູຝຶກມາຈາກຕ່າງປະເທດ ມາຝຶກຊ້ອມໃຫ້ແກ່ນັກກິລາທີມຊາດລາວ;

4) ກອງເລຂາ ກໍ່ໄດ້ປະສານເອົາຂໍ້ມູນດ້ານສະຖານທີ່ແຂ່ງຂັນ ແລະ ທີ່ພັກ ຈາກເຈົ້າພາບເພື່ອມາເຜີຍແຜໃຫ້ແກ່ຄະນະຄູຝຶກໄດ້ຮັບຮູ້ເຖິງທີ່ຕັ້ງຂອງສະຖານທີ່ພັກເຊົາ ແລະ ສະຖານທີ່ແຂ່ງຂັນ.

# ໄລຍະເຂົ້າຮ່ວມແຂ່ງຂັນ:



ການເຂົ້າຮ່ວມງານມະຫາກຳກິລາຊີເກມ ຄັ້ງທີ 33 ທີ່ຣາຊອານາຈັກໄທ ໃນລະຫວ່າງວັນທີ 9-20 ທັນວາ 2025 ເປັນການແຂ່ງຂັນກິລາໃນລະດັບພາກພື້ນອາຊຽນ ໂດຍມີການຊີງຫຼຽນຄຳທັງໝົດ 576 ຫຼຽນ, ໃນຈຳນວນ 50 ປະເພດກິລາ ແລະ ກິລາສາທິດ 3 ປະເພດ. ສປປລາວໄດ້ສົ່ງຄະນະກິລາທີມຊາດ ເຂົ້າຮ່ວມທັງໝົດ 36 ປະເພດເຊິ່ງລວມມີຈຳນວນພົນທັງໝົດ 507 ຄົນ. ໃນນັ້ນປະກອບມີນັກກິລາ 368 ຄົນ (ຍິງ 113 ຄົນ) ແລະກຳມະການຕັດສິນຈຳນວນ 10 ທ່ານໂດຍແບ່ງອອກເປັນກຸ່ມກິລາທີ່ລັດຖະບານຮັບຜິດຊອບ 19 ປະເພດກິລາແລະສະຫະພັນກິລາແຫ່ງຊາດກຸ້ມຕົນເອງຮອບດ້ານ 17 ປະເພດ.





1) ຄະນະຮັບຜິດຊອບໄດ້ປະສານງານກັບປະເພດເຈົ້າພາບກຳນົດການເດີນທາງໄປ-ກັບຂອງຄະນະກິລາທີ່ເຂົ້າຮ່ວມການແຂ່ງຂັນກິລາຊີເກມ ຄັ້ງທີ33 ເພື່ອອຳນວຍຄວາມສະດວກໃຫ້ແກ່ຄະນະກິລາທີມຊາດໂດຍປະຕິບັດຕາມລະບຽບຫຼັກການຂອງຄະນະມົນຕີຊີເກມວາງອອກ;

2) ການເຂົ້າຮ່ວມແຂ່ງຂັນກິລາຊີເກມຄັ້ງນີ້ ຫຼາຍສະຫະພັນທີ່ມີປະທານຫຼືຮອງປະທານເປັນຜູ້ນຳພານັກກິລາຂອງຕົນເຂົ້າຮ່ວມການແຂ່ງຂັນເຮັດໃຫ້ນັກກິລາມີຄວາມໝັ້ນໃຈໃນເວລາລົງແຂ່ງຂັນແຕ່ລະຄັ້ງພ້ອມດຽວກັນກໍ່ໄດ້ອັດສີດນັກກິລາຂອງຕົນທີ່ສາມາດຍາດໄດ້ຫຼຽນຕ່າງໆ;

3) ຄະນະນຳຄອລ, ຫົວໜ້າຄະນະກິລາແລະກອງເລຂາພ້ອມດ້ວຍທີມງານແພດກິລາ ກໍໄດ້ຕິດຕາມໃຫ້ກຳລັງໃຈນັກກິລາທີ່ຈະລົງແຂ່ງຂັນແຕ່ລະມື້ ພ້ອມທັງປະສານງານກັບພາກສວນທີ່ກ່ຽວຂ້ອງ ອຳນວຍຄວາມສະດວກໃຫ້ແກ່ຄູຝຶກ ແລະ ນັກກິລາທີມຊາດເດີນທາງໄປແຂ່ງຂັນທັນຕາມກຳນົດເວລາ.





# ຜົນສຳເລັດການເຂົ້າຮ່ວມແຂ່ງຂັນ

**LAO PDR**

ຜ່ານການເຂົ້າຮ່ວມແຂ່ງຂັນຄັ້ງນີ້, ນັກກິລາທີມຊາດລາວ ສາມາດຍາດໄດ້ຫຼຽນທັງ ໝົດຈຳນວນ 39 ຫຼຽນ ຄື: ຫຼຽນຄຳ 02 ຫຼຽນ ຈາກກິລາເປຕັງ (ລາຍການ ດ່ຽວຍິງ ແລະ ລາຍການ ທີມປະສົມ ຊາຍ 1 ຍິງ 2 ), ຫຼຽນເງິນ 09 ຫຼຽນ ແລະ ຫຼຽນທອງ 28 ຫຼຽນ ຈັດຢູ່ອັນດັບ 8 ໃນ 10 ປະເທດເຂົ້າຮ່ວມ (ທີມຈາກປະເທດກຳປູເຈຍຖອນທີມເນື່ອງຈາກມີເຫດການບັນຫາລະຫວ່າງປະເທດ) ດັ່ງຕາຕະລາງ ລຸ່ມນີ້:

THAILAND 2025

**Medal Standings**

| As of 20 DEC | | Gold | Silver | Bronze | Total |
|---|---|---|---|---|---|
| 1 | Thailand | 233 | 154 | 112 | 499 |
| 2 | Indonesia | 91 | 111 | 131 | 333 |
| 3 | Vietnam | 87 | 81 | 110 | 278 |
| 4 | Malaysia | 57 | 57 | 117 | 231 |
| 5 | Singapore | 52 | 61 | 89 | 202 |
| 6 | Philippines | 50 | 73 | 154 | 277 |
| 7 | Myanmar | 3 | 21 | 49 | 73 |
| 8 | Lao People's Democratic Republic | 2 | 9 | 28 | 39 |
| 9 | Brunei Darussalam | 1 | 3 | 5 | 9 |
| 10 | Timor-Leste | 0 | 1 | 7 | 8 |









# ພາບບັນຍາກາດ ການແຂ່ງຂັນງານມະຫາກຳກິລາຊີເກມ ຄັ້ງທີ 33 ທີ່ນະຄອນຫຼວງບາງກອກ ຣາຊະອານາຈັກໄທ ລະຫວ່າງວັນທີ 9-20 ທັນວາ 2025



## LAO PDR

2 9 28







1) ໃນການເຂົ້າຮ່ວມແຂ່ງຂັນກິລາ ຊີເກມ ຄັ້ງນີ້ ມີຫຼາຍປະເພດກິລາ ກໍ່ສາມາດສ້າງຜົນງານໄດ້ດີເປັນຕົ້ນແມ່ນສະຖິຕິດີຂຶ້ນ, ການແຂ່ງຂັນກໍ່ມີລັກສະນະສູສີກັບຄູ່ແຂ່ງຂັນ, ນັ້ນ ມັນສະແດງເຖິງຄວາມຮັບຜິດຊອບຂອງຄະນະນຳ, ຄູຝຶກ ແລະ ນັກກິລາ ທີ່ໄດ້ເປັນເຈົ້າການໃນການປະຕິບັດລະບຽບກະຕິກາການແຂ່ງຂັນວາງອອກ;

1) ການເຂົ້າຮ່ວມແຂ່ງຂັນກິລາໃນລະດັບອານຸພາກພື້ນ, ພາກພື້ນແລະສາກົນຂອງບັນດາສະຫະພັນກິລາແຫ່ງຊາດສາມາດຍາດໄດ້ 7 ຫຼຽນຄຳ; 9 ຫຼຽນເງິນແລະ 22 ຫຼຽນທອງ (ກິລາຈູຈິດຊູ, ກະຕໍ້, ກາຣາເຕໂດປັນຈັກສີລັດ, ເທຄວັນໂດ, ເພາະກາຍແລະວູຊູ).












THAILAND 2025

ພາບບັນຍາກາດ ການແຂ່ງຂັນງານມະຫາກຳກິລາຊີເກມ ຄັ້ງທີ 33 ທີ່ນະຄອນຫຼວງບາງກອກ ຣາຊະອານາຈັກໄທ ລະຫວ່າງວັນທີ 9-20 ທັນວາ 2025




# LAO PDR

# ພາບທັບນັກກິລາລາວ ທີ່ໄດ້ຮັບຫຼຽນ ໃນງານມະຫາກຳກິລາຊີເກມ ຄັ້ງທີ 33

## PETANQUE



BOVILAK THEPPHAKAN

[ WOMEN ] SINGLES



BOUTTA NEUTHSAVATH
NOY MANYTHONE
MANIVANH SOULIYA

[MIXED] MIXED TRIPLES TEAM
(1 MEN + 2 WOMEN)





BOUNTAMY SOUTHAMMAVONG

[ MEN ] SINGLES



VILASACK LATHSAVONG, SOMSAMAY XAMOUNTY, CHANSAMONE VONGSAVATH

MIXED TRIPLES TEAM (1 WOMEN + 2 MEN)









MEN SHOOTING : PHOUDTHALA KEOKANNIKA
MEN DOUBLES : MAISANH VIPHAKON; PEXA OULAMANIVONG
WOMEN DOUBLES : ALY SENGCHANPHET, CHINDAVONE SISAVATH
MIXED DOUBLE: NOUTMANY MUENXAY; KHENTHONG OUNNALOM
WOMEN TRIPLES :
MEN TRIPLES : PHONEXAY DOUANGMISY; KHALOUY PHETVALY; LAR MIENMANY; NALONGLITH VONGDALA



# ພາບທັບນັກກິລາລາວ ທີ່ໄດ້ຮັບຫຼຽນ ໃນງານມະຫາກຳກິລາຊີເກມ ຄັ້ງທີ 33

## SNOOKER

### MEN'S TEAM

SURIYA MINALAVONG
PHONESAVANH XAPHAKDY
SITHTHIDETH SAKBIENG







### WOMEN TEAM

NIMITH INTHAVONG
DAOHEUANG SIHALATH





### [ WOMEN ] SINGLES

DAOHEUANG SIHALATH

## PENCAK SILAT



### MEN'S SINGGLE (TUNGGAL)

ALISACK SINGSOUVONG



## CYCLING - ROAD

### [MEN] INDIVIDUAL TIME TRIAL

*ARIYA PHOUNSAVATH*



# MUAY



SOUKAN TAIPANYAVONG
LIGHTWEIGHT 60 KG

LATXASAK SOULIYAVONG
LIGHTWEIGHT 67 KG

LIGHT FLYWEIGHT 48 KG
LOUKKET SITHONG

LIGHT FLYWEIGHT 48 KG
SIBOU BANXADETH

FEATHEWEIGHT 57 KG
THONGBANG SEUAPHOM

# WUSHU



PHONH SAIBOUNPHENG
[MEN] SANDA 70 KG



HONGPASEUTH OUDOMDETH
[MEN] SANDA 65 KG

# WRESTLING



FREESTYLE EVENTS
GRECO-ROMAN
[ MEN ] 65 KG
DAWSON STEPHEN SIHAVONG




# KICKBOXING

[ MEN ] LOW KICK 51KG





SITTHACHAK SOUKKHASEUM



# ພາບທັບນັກກິລາລາວ ທີ່ໄດ້ຮັບຫຼຽນ ໃນງານມະຫາກຳກິລາຊີເກມ ຄັ້ງທີ 33




SILVER MEDAL




## E-SPORTS

[ WOMEN ] ARENA OF VALOR(AOV)

TOOKTA PATHAMMAVONG
PHOYPHAILIN SOMSAMOUTH
PENGHOM SIMMAVONG
DAOFON PHOUNSAVANH
SOUDSADA VILAYMANYVONG



[MEN] ARENA OF VALOR(AOV)TEAM

ANOULAK INMIXAY
PHOUTHASEN SAVANH
BOUNKEUTH KHANMALAY
CHANTHAXAY SOUNDAVONG
PHOUTTHASONE VANISOUVONG



## SEPAK TAKRAW



[MAN] CHINLONE (LINKING)

VILAPHAN SYSOUNON
SOUKNILUN XAYKONGSA
ADONG PHOUMISIN
VIRIYAN SOMBUTPHOUTHONE
SUPHICK ALOMSOUK
ANOUSONE SOUNDALA
PHITTHASANH BOUNPASEUTH
YOTHIN SOMBATPHOUTHONE

[ MEN ] QUADRANT EVENT

NORKHAM VONGXAY
VANSONE BOUAVANG
AKSONESAVANH PHILAVONG
KOY XAYAVONG
NOUANDAM VOLABOUTH
SONSAVAN KEOSOULIYA



[WOMEN] CHINLONE (LINKING)

NORKHAM VONGXAY
TOUNY VILAYSOUK
VANSONE BOUAVANG
AKSONESAVANH PHILAVONG
SONE AMPHAY SOULINTHONE
MAY PHIATHEP
SOUKVILAY PHIMMACHAK
PHILAVANE CHANTHASIL



[WOMEN] HOOP

NORKHAM VONGXAY
VANSONE BOUAVANG
KOY XAYAVONG
MAY PHIATHEP
PHILAVANE CHANTHASILY
SONSAVAN KEOSOULIYA



## BOXING



48KG KHAMPHOUVANH KHAMSATHONE



51KG VANESY HEUANGTHISOUAN



63.5KG THONGNIN XAYASENG



# ພາບທັບນັກກິລາລາວ ທີ່ໄດ້ຮັບຫຼຽນ ໃນງານມະຫາກຳກິລາຊີເກມ ຄັ້ງທີ 33

## JU-JITSU-DUO CLASSIC






[ WOMEN ] DUO SHOW

MALA CHANTHALACKSA
KOUNGKING BOUDDAXAY

## JUDO




[WOMEN] JU-NO-KATA

PHONEVAN SY AMPHONE
MAYOULY PHANOUVONG

[MEN] NAGE-NO-KATA

KHAMSY KHOUNNIVATH
DETHSOUVAN VONGSAVANHKHAM

## TAEKWONDO








[ WOMEN ] FREESTYLE POOMSAE

PHOUTTAVAN
CHANTHAKHAMMANY

[MEN] OVER 58 KG & NOT EXCEEDING 63 KG

PHOUTTHASONE SAYYASENG

# ນັກກິລາເຊື້ອຊາດລາວ ທີ່ຮ່ວມງານມະຫາກຳກິລາຊີເກມ ຄັ້ງທີ 33



ກິລາລົດຖີບ ARIYA PHOUNSAVATH



ກິລາມວຍປ້ຳ
SIHAVONG DAWSON STEPHEN



ກິລາຟັນ
MR. SAYSANA GEOFFROY



ກິລາປິງປ່ອງ
JOHAN HAGBERG



ກິລາຢິມນາສສະຕິກ
PRAEWA PHILAPHANDETH



ກິລາຈູຈິດຊູ
SLAYMAN JEDIDIAH PHOMSAVATH



ກິລາຈູຈິດຊູ
SLAYMAN TIMOTHY BOONXAY



ກິລາລົດຖີບ
FANNY MALISSA



ກິລາລອຍນ້ຳ
ASTRID MALEEI



ກິລາລອຍນ້ຳ
ARIANA SOUTHA



ກິລາລອຍນ້ຳ
STEVEN INSIXIENGMAY



ກິລາລອຍນ້ຳ
KAYLONE AMPHONESUH



ກິລາລອຍນ້ຳ
ANGELINA BELLA MESSINA



ກິລາເທັນນິດ
SIANA CHAMPA MACDONALD



ກິລາເບສບອນ
DAVY PHRATHEP



ກິລາເບສບອນ
DAVONG PHRATHEP

# ກຳມະການລາວ ທີ່ຮ່ວມຕັດສິນໃນງານມະຫາກຳກິລາຊີເກມ ຄັ້ງທີ 33



ກິລາເທຄວັນໂດ
ທ່ານ ນາງ ວາລີ ມາດມະນີສອນ



ກິລາກາຣາເຕໂດ
ທ່ານ ນາງ ຈັນສຸດາ ເພັດສີຣິແສງ



ກິລາດອກປີກໄກ່
ທ່ານ ບຸນຄ້ຳ ສີມະລີວົງ



ທ່ານ ນາງ ອາລີນາ ວົງສາ ກິລາປິ່ງປ໋ອງ



ກິລາຍິງທະນູ
ທ່ານ ພຸດລຳໄພ ທຽມພະສອນ



ກິລາປັນຈັກສີລັດ
ທ່ານ ຣອ ໂອເຄ ບົດສະຫວ່າງ



ກິລາປັນຈັກສີລັດ
ທ່ານ ວັນໄຊ ອຸດົມຜົນ



ກິລາກະຕໍ້
ທ່ານ ເປີ້ນ ອິນທະນໍ



ກິລາຄິກບອກຊິງ
ທ່ານ ວຽງໄຊ ມວນວິໄລ



ກິລາປັນອີສະປອດ
ທ່ານ ສົມພະຈັນ ແສງສີລາວົງ



ກິລາຢູໂດ
ທ່ານ ຈິດຕິເວດ ມວນຄາຍສີ




# ດ້ານດີ

- ມີການຊີ້ນຳ-ນຳພາ ຈາກຄະນະ ປະທານ ຄອລ, ຄະນະນຳກະຊວງ

ມີການຊີ້ນຳ-ນຳພາ ຈາກຄະນະປະທານ ຄອລ, ຄະນະນຳກະຊວງສສກ ຈຶ່ງເຮັດໃຫ້ການກະກຽມ ແລະ ເຂົ້າຮ່ວມການແຂ່ງຂັນກິລາ ໃນລະດັບອານຸພາກພື້ນ, ພາກພື້ນ ແລະ ສາກົນ ໄດ້ຮັບຜົນສຳເລັດ;

- ລັດຖະບານໄດ້ໃຫ້ຄວາມສຳຄັນ ສະໜອງງົບປະມານເຂົ້າໃນການກະກຽມ ແລະ ເຂົ້າຮ່ວມການແຂ່ງຂັນງານມະຫາກຳກິລາຊີເກມຄັ້ງທີ 33 ຈຶ່ງສາມາດຍາດໄດ້ຜົນສຳເລັດ;
- ໄດ້ມີການປຶກສາຫາລື ແບ່ງຄວາມຮັບຜິດຊອບ ໃຫ້ແຕ່ລະທ່ານ ລົງຊຸກຍູ້ບັນດາສະຫະພັນກິລາແຫ່ງຊາດ ໃນການຈັດຕັ້ງເຄື່ອນໄຫວ ຕາມການຊີ້ນຳຂອງປະທານ ຄອລ.










# ຂໍ້ຄົງຄ້າງ

- ການຈັດຕັ້ງປະຕິບັດບາວຽກງານ ບໍ່ສາມາດບັນລຸຕາມເປົ້າໝາຍຍ້ອນບຸກຄະລາກອນ

- ຈຳນວນໜຶ່ງຂອງກຳມະການເຕັກນິກກິລາຄອລ ຍັງຂາດຄວາມເປັນເຈົ້າການໃນການຊ່ວຍຄົ້ນຄວ້າວຽກງານກິລາ;
- 2.ບາງສະຫະພັນກິລາແຫ່ງຊາດສົ່ງບຸກຄະລາກອນເຂົ້າຮ່ວມ ຍັງບໍ່ຖືກຕາມວິຊາສະເພາະກິລາຂອງຕົນເຮັດໃຫ້ການສ້າງບຸກຄະລາກອນກິລາພົບຄວາມຫຍຸ້ງຍາກ;
- 3.ການລົງຕິດຕາມການຝຶກຊ້ອມຂອງຄະນະຮັບຜິດຊອບທີ່ລົງຕິດຕາມການຝຶກຊ້ອມຂອງນັກກິລາຢູ່ແຕ່ລະສູນຝຶກຫຼື ສະໂມສອນພົບຄວາມຫຍຸ້ງຍາກຍ້ອນສະຖານທີ່ຝຶກຊ້ອມກະແຈກກະຈ່າຍ.



# ບາງບົດຮຽນທີ່ຖອດຖອນໄດ້







1) 1.ຈະຕ້ອງໄດ້ຈັດກອງປະຊຸມແລກປ່ຽນບົດຮຽນພາຍໃນ ຄະນະກຳມະການເຕັກນິກກິລາ ຄອລ ເພື່ອເອກະພາບໃນການກຳນົດບັນດາແຜນການ ແລະ ກິດຈະກຳຕ່າງໆຮ່ວມກັນ ພ້ອມທັງນຳໃຊ້ທ່າແຮງຂອງວິຊາການທີ່ຈົບວິຊາສະເພາະດັ່ງກ່າວ ສ້າງເປັນວິທະຍາກອນ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງວິຊາການກິລາຕ່າງໆ;

2) ສືບຕໍ່ຄັດເລືອກເອົາຄູຝຶກ, ກຳມະ ການຕັດສິນ ແລະ ນັກກິລາ ເພື່ອສົ່ງໄປຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາສະເພາະ ແລະ ເຕັກນິກພິເສດຂອງແຕ່ລະປະເພດກິລາ ຢູ່ຕ່າງປະເທດ;

3) ສ້າງພະນັກງານສືບທອດປ່ຽນແທນ ໃນສາຂາວິຊາທີ່ມີຄວາມຈຳເປັນ ເພື່ອເຮັດໃຫ້ການພັດທະນາກິລາເກີດຄວາມຍືນຍົງ.

# ທິດທາງແກ້ໄຂ



1) ປັບປຸງຂອດປະສານງານ ໃຫ້ມີຄວາມຄອງຕົວໄວຂຶ້ນລະຫວ່າງກຳມະການເຕັກນິກກິລາ ຄອລ, ສະຫະພັນກິລາແຫ່ງຊາດ ແລະ ພາກສວນທີ່ກ່ຽວຂ້ອງ;

2) ຈັດກອງປະຊຸມ ເພື່ອຖອດຖອນບົດຮຽນຮ່ວມກັນກັບພາກສວນທີ່ກ່ຽວຂ້ອງ ໂດຍສະເພາະ ແມ່ນຄະນະກຳມະການເຕັກນິກກິລາ ຄອລ ແລະ ສະຫະພັນກິລາແຫ່ງຊາດ ທີ່ເຂົ້າຮ່ວມການແຂ່ງຂັນກິລາຊີເກມ;

3) ລັດຖະບານຄວນຈັດສັນງົບປະມານເຂົ້າໃນການຝຶກຊ້ອມຂອງນັກກິລາ ທີ່ຈະເຂົ້າຮ່ວມການແຂ່ງຂັນ ໃນລະດັບອານຸພາກພື້ນ, ພາກພື້ນ ແລະ ສາກົນ ໃຫ້ແທດເໝາະກັບສະພາບເສດຖະກິດໃນປັດຈຸບັນ.



# ແຜນການເຄື່ອນໄຫວ ປີ 2026



**ຄະນະກຳມະການເຕັກນິກກິລາຄອລ ຈະຕ້ອງໄດ້ຈັດກອງປະຊຸມປຶກສາຫາລືວາງແຜນການຈັດຕັ້ງເຄື່ອນໄຫວ ຮ່ວມກັບສະຫະພັນກິລາແຫ່ງຊາດແລະ ພາກສວນທີ່ກ່ຽວຂ້ອງ ເພື່ອກະກຽມສືບຕໍ່ດັ່ງນີ້ :**

1. ສືບຕໍ່ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານ ແລະ ຈັດຝຶກອົບຮົມທາງດ້ານວິທະຍາສາດການຝຶກຊ້ອມກິລາ ໃຫ້ແກ່ຄູຝຶກທີມຊາດ 5 ຄັ້ງຕໍ່ປີ;

2 ສືບຕໍ່ສົມທົບກັບສະຫະພັນກິລາແຫ່ງຊາດ ແລະ ພາກສວນທີ່ກ່ຽວຂ້ອງ ກະກຽມຄັດເລືອກຄູຝຶກ ແລະ ນັກກິລາທີມຊາດ ເພື່ອສົ່ງເຂົ້າຮ່ວມງານມະຫາກຳກິລາເອຊຽນເກມຫາດຊາຍ ຢູ່ສັນຍາ ສປ ຈີນ, ງານມະຫາກຳກິລາເອຊຽນເກມ ຄັ້ງທີ 20 ຢູ່ນາໂກຍາ ປະເທດ ຍີປຸ່ນ, ງານມະຫາກຳກິລາໃນຮົ່ມ ແລະ ຕໍ່ສູ້ປ້ອງກັນຕົວ ຄັ້ງທີ 5 ຢູ່ນະຄອນລີຍາສ ປະເທດຊາອຸດີອາລະເບຍ, ງານມະຫາກຳກິລາຊາວໜຸ່ມສາກົນ ຢູ່ປະເທດ ເຊເນການ ແລະ ລາຍການແຂ່ງຂັນອື່ນໆ ຕາມການເຊີນ;

3. ສືບຕໍ່ປະສານງານກັບອົງການຈັດຕັ້ງກິລາສາກົນ ເພື່ອຍາດແຍ່ງເອົາການຊ່ວຍເຫຼືອທາງດ້ານທຶນມາພັດທະ ນາບຸກຄະລາກອນກິລາຂອງ ສປປ ລາວ.











